ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດ ໄຕມາດ 3 ປີ 2021

30 ກັນຍາ 2021



Lao-Thai Friendship Road, Thongkang Village, Sisattanak District, P.O. Box 2392, Vientiane Capital. Lao PDR.
Tel: (856-21)316142. Fax: (856-21)316141, Email: edlgenhq@edlgen.com.la website: www.edlgen.com.la

ສາລະບານ

1. ປະຫວັດຫຍໍ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.....1

2. ທຸລະກິດ.....3

3. ກົງຈັກການຈັດຕັ້ງ.....4

3.1 ໂຄງຮ່າງການຈັດຕັ້ງ.....4

4. ຄະນະກຳມະການຕ່າງໆ.....9

4.1. ຄະນະກຳມະການຂອງສະພາບໍລິຫານ.....9

4.2. ກອງປະຊຸມສະພາບໍລິຫານ.....9

1. ຄະນະກຳມະການກວດສອບ.....10

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....10

4.3 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່.....10

1. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ).....10

2. ຄະນະກຳມະການຄົ້ນຄວ້ານະໂຍບາຍ ແລະ ປະຕິບັດວິໄນ (ຄນຍວ).....11

5. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ສັງຄົມ.....11

5.1. ວຽກງານດ້ານສິ່ງແວດລ້ອມ.....11

5.2. ວຽກງານດ້ານສັງຄົມ.....11

6. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.....11

6.1 ການຜະລິດ.....12

6.2 ລາຍຮັບ.....12

6.3 ລາຍຈ່າຍ.....12

6.4 ຜົນການດຳເນີນທຸລະກິດ.....13

6.5 ການມອບພັນທະ.....13

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ; ຕູ້ ປ.ນ. 2392

ໂທລະສັບ: (+856-21) 316 142; ໂທລະສານ: (+856-21) 316 141; ອີເມວ: edlgenhq@edlgen.com.la; ເວັບໄຊຣ: www.edlgen.com.la

1. ປະຫວັດຫຍໍ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາເປັນຊັບ ສິນສ້າງຕັ້ງ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນ ໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2 , ເຂື່ອນໄຟຟ້າແຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງ ຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ່ມທຶນດ້ວຍການອອກຮຸ້ນຄັ້ງ ທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, 07 ມັງກອນ 2011 ບໍລິສັດໄດ້ ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນ ວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນ ຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ສັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອື່ນ 25% ແມ່ນຂອງນັກລົງທຶນພາຍໃນແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ ແລະ ແບບສະເໜີ ຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດໃຫ້ ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ເພີ່ມຂຶ້ນເປັນ 881 MW. ດັ່ງນັ້ນ ໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດ ທະບຽນເປັນເງິນ 4.904.867.060.000 ກີບ ແລະ ມີຮຸ້ນທັງໝົດ 1.226.216.765 ຮຸ້ນ, ໃນນັ້ນ ຟຟລ ແມ່ນຍັງ ຮັກສາ ສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການ ຈັດລະດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານ ບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນ ນັ້ນ ມີໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອື່ນ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກຮຸ້ນ ເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການ ຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ຈະຮັບ ໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເປັນ

ເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ, ໃນນັ້ນ ຟຟລ ແມ່ນຍັງຮັກສາ ສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນຳ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫະລັດ ທີ່ປະເທດໄທ, ທຶນຈຳນວນດັ່ງກ່າວນີ້ ແມ່ນໄດ້ຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບໍ່ພາກຂະຫຍາຍ, ໂຄງ ການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

ວັນທີ 14 ທັນວາ 2017 ໄດ້ສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນ ຈຳກັດຜູ້ດຽວ.

ວັນທີ 18 ມັງກອນ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳແບ່ງ (10%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 3,4 MW, ວັນທີ 4 ກຸມພາ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້າດອນ ສະໂຮງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 52 MW. ໃນວັນທີ 13 ກໍລະກົດ 2018, ຜ-ຟຟລ ໄດ້ ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ ທີ່ ປະເທດໄທ ເຊິ່ງສາມາດຂາຍໄດ້ 13.660,40 ລ້ານບາດ ເພື່ອລົງທຶນເຂົ້າ ໃນການຊື້ຮຸ້ນ ຂອງ ໂຄງການເຂື່ອນໄຟຟ້າໄຊຍະບູລີ ແລະ ດອນສະໂຮງ ; ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳ ລອງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 1 MW ແລະ ໂຮງງານຜະລິດໄຟຟ້າພະລັງງານແສງຕາເວັນ (60%) ຕາມສັດສ່ວນ ຜ-ຟຟລ ຖືຮຸ້ນເທົ່າກັບ 19,2 MW.

ປີ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າໄຊຍະບູລີ ໃນວັນທີ 19 ມີນາ 2019 ຕາມຊັດສ່ວນ ທີ່ ຟຟລ ຖືຮຸ້ນ 20% ເທົ່າກັບກຳລັງການຕິດຕັ້ງ 257 MW; ໃນເດືອນພຶດສະພາ 2019, ຜ-ຟຟລ ໄດ້ຮັບໂອນ ຮຸ້ນຂອງເຂື່ອນໄຟຟ້ານ້ຳມັງ 1 ຕາມຊັດສ່ວນ ຟຟລ ຖືຮຸ້ນ 10% ເທົ່າກັບ 6,4 MW ແລະ ເຂື່ອນໄຟຟ້ານ້ຳອູ 2, 5 ແລະ 6 ດ້ວຍຊັດສ່ວນທີ່ ຟຟລ ຖືຮຸ້ນ 15% ເທົ່າກັບ 18 MW, 36 MW ແລະ 27 MW ຕາມລຳດັບ ເຮັດ ໃຫ້ ຜ-ຟຟລ ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 1.643,2 MW.

ປີ 2020 ກຳລັງການຕິດຕັ້ງຂອງ ໂຄງການພະລັງງານໄຟຟ້າ ທີ່ມີການດຳເນີນການຜະລິດແລ້ວ ຂອງ ຜ-ຟຟ ລ ທັງໝົດ 1.682,75 MW, ໃນນັ້ນ ໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງຮ້ອຍເປີເຊັນ ມີທັງໝົດ 10 ໂຄງການ ລວມເປັນກຳລັງຕິດຕັ້ງ 699 MW (ນັບລວມໂຄງການພາກຂະຫຍາຍນ້ຳງື່ມ 1), ແລະ ໂຄງການຜູ້ຜະ ລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 16 ໂຄງການ, ໃນນັ້ນ ມີໂຄງການໄຟຟ້າ ພະລັງງານນ້ຳຈຳນວນ 15 ໂຄງການ ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ ລວມກຳລັງຕິດຕັ້ງຕາມສັດ ສ່ວນທັງຫມົດ 983,75 MW.

ມາເຖິງວັນທີ 1 9 ກຸມພາ ປີ 20 21 ໄດ້ມີການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ ຖືຄອງ ຈຳນວນ 24% ຫຼື ຄິດເປັນຈຳນວນຮຸ້ນທັງໝົດ 403.032.887 ຮຸ້ນໃຫ້ແກ່ ບໍລິສັດ ພີງຊັບທະວີກໍ່ສ້າງ ຂົວ-ທາງ ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.

2. ທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ ຂຶ້ນແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ.
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະບຳລຸງຮັກສາໃຫ້ແກ່ບັນດາໂຄງການຜະລິດໄຟຟ້າຕ່າງໆໃນຂອບເຂດ ທົ່ວປະເທດ.

❖ ວິໄສທັດ

1. ເປັນບໍລິສັດນຳໜ້າ ຂອງ ສປປ ລາວ ໃນການຜະລິດພະລັງງານໄຟຟ້າ ທີ່ໝັ້ນຄົງ ເພື່ອຕອບສະໜອງໃນການ ພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂອງພູມິພາກຕາມທິດ ສີຂຽວ ແລະ ຍືນຍົງ.
2. ເປັນບໍລິສັດນຳໜ້າ ໃນການໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ໂຮງງານຜະລິດໄຟຟ້າໃນ ສປປ ລາວ ແລະ ໃນພູມິພາກ.
3. ເປັນບໍລິສັດນຳໜ້າທີ່ ສ້າງມູນຄ່າເພີ່ມ ໃຫ້ແກ່ຜູ້ຖືຮຸ້ນ.


❖ ພາລະກິດ

1. ສະໜອງໄຟຟ້າ ດ້ວຍແຫຼ່ງພະລັງງານສະອາດ ແລະ ພະລັງງານທົດແທນ ໂດຍຄຳນຶງເຖິງສິ່ງແວດລ້ອມ ເພື່ອ ສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມິພາກ.
2. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ຈະແຈ້ງ, ໂປ່ງໃສ ແລະ ກວດສອບໄດ້.
3. ສືມທຶບຢ່າງສະໜິດແໜ້ນ ກັບ ຄູ່ຮ່ວມຍຸດທະສາດ ແລະ ບໍລິສັດຈຳໜ່າຍພະລັງງານໄຟຟ້າ ໃນການສະໜ ອງພະລັງງານໄຟຟ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ພາຍໃນປະເທດ ແລະ ພູມິພາກ.
4. ຕັ້ງໜ້າຍົກສູງປະສິດທິພາບ ແລະ ພັດທະນາບໍລິສັດໃນທຸກດ້ານ ເພື່ອໃຫ້ກາຍເປັນທັງຜູ້ຜະລິດ ແລະ ໃຫ້ ບໍລິການຄຸ້ມຄອງ-ບຳລຸງຮັກສາ ໂຮງງານຜະລິດໄຟຟ້າ ໃນ ສປປ ລາວ ແລະ ພູມິພາກ.
5. ລົງທຶນໃນທຸລະກິດທີ່ເນັ້ນໃສ່ການສ້າງມູນຄ່າເພີ່ມ ທັງໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອໃຫ້ໄດ້ຮັບຜົນ ຕອບແທນ ທີ່ ສູງສຸດ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ.

3. ภิ่งจัภาภานจัดตั้ง

3.1 โถงธ่างภาภจัดตั้ง

โถงธ่างภาภจัดตั้ง ผ-ฟฟล ปะภอบด้อย สะพาบໍลิหาภ 11 ท่าภ (ใภ่ภี้ภำมะภาภอิดสะหละ 4 ท่าภ), ถะมะผู้อำภอยภาภใหย่ 6 ท่าภ, ภี 5 ฝ่าย, 18 พะแภภา และ 13 เฮื่อภ.



❖ จำภอภพิภ

จำภอภพิภ ธอๆ ผ-ฟฟล และ บໍลิสัดใภเถือ ภีหัๆหภ **782** ถิภ, ใภ่ภี้ยิๆภี **126** ถิภ

ຄະນະສະພາບໍລິຫານ ແລະ ປະຫວັດຫຍໍ້
ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ

* ວັນເດືອນປີເກີດ: 05/05/1955
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ອາດີດ ລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ:
  - ປະລິນຍາເອກ, ພາກວິຊາການພັດທະນາເສດຖະກິດ.
  - ປະລິນຍາໂທ, ພາກວິຊາວິສະວະກຳໄຟຟ້າ ອະດີດສະຫະພາບໂຊຫວຽດ.



ທ່ານ ຈັນທະບຸນ ສຸກອາລຸນ
ຮອງປະທານສະພາບໍລິຫານ

* ວັນເດືອນປີເກີດ: 03/05/1973
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ.
  - ປະລິນຍາຕີສາຂາ ວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.



ທ່ານ ປອ. ບຸນທະວີ ສີສຸພັນທອງ
ຮອງປະທານສະພາບໍລິຫານ
ກຳມະການອິດສະຫລະ

* ວັນເດືອນປີເກີດ: 26/06/1954
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ອາດີດ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ.
* ລະດັບການສຶກສາ:
  - ປະລິນຍາເອກ ດ້ານວິຊາເສດຖະສາດ, ປະເທດຝຣັ່ງ (Paris XII)



ທ່ານ ດວງສີ ພາຣາຍົກ
ກຳມະການ

* ວັນເດືອນປີເກີດ: 08/03/1963
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
* ລະດັບການສຶກສາ:
  - ປະລິນຍາໂທ, ພາກວິຊາລະບົບຕາໜ່າງໄຟຟ້າ, ອະດີດສະຫະພາບໂຊຫວຽດ.



ທ່ານ ຄຳພັ ທິນນະກອນ
ກຳມະການ

* ວັນເດືອນປີເກີດ: 05/05/1961
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ອາດີດຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ການເງິນ ແລະ ສິນເຊື່ອ, ມະຫາວິທະຍາໄລເສດຖະສາດ ບຸນຍັດຊາແດ ລັດອາແຊບາຍຈັນ, ອາດີດສະຫະພາບໂຊຫວຽດ



ທ່ານ ສົມພິດ ແກ້ວວິຈິດ
ກຳມະການ

* ວັນເດືອນປີເກີດ: 01/05/1968
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ:
  - ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ມະຫາວິທະຍາໄລແຫ່ງຊາດລາວ



ທ່ານ ພົງສະຫວັດ ເສນາພອນ
ກຳມະການ

* ວັນເດືອນປີເກີດ: 10/10/1978
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ປະທານສະພາບໍລິຫານ ແລະ ປະທານບໍລິຫານ ບໍລິສັດ ພົງຊັບ ທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.
* ລະດັບການສຶກສາ: ວິທະຍາໄລ ບໍລິຫານທຸລະກິດ ແສງສະຫວັນ.



ທ່ານ ສົມລັດ ເມກອາກາດ
ກຳມະການ

- ວັນເດືອນປີເກີດ: 21/07/1972
- ສັນຊາດ: ລາວ
- ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການ ບໍລິສັດ ພັງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານຈຳກັດຜູ້ດຽວ.
- ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ການບໍລິຫານຄຸ້ມຄອງ, ທີ່ມະຫາວິທະຍາໄລຊິງຫົວ, ສປ ຈີນ



ທ່ານ ຄຳແກ້ວ ວິສີສົມບັດ
ກຳມະການອິດສະຫລະ

- ວັນເດືອນປີເກີດ: 29/12/1975
- ສັນຊາດ: ລາວ
- ຕຳແໜ່ງປັດຈຸບັນ: ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
- ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ເສດຖະສາດ, ປະເທດອິດສະຕາລີ.



ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ
ກຳມະການອິດສະຫລະ

- ວັນເດືອນປີເກີດ: 02/05/1972
- ສັນຊາດ: ລາວ
- ຕຳແໜ່ງປັດຈຸບັນ: ຮອງຫົວໜ້າກົມສົ່ງເສີມການລົງທຶນ ຊີ້ນຳວຽກງານການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ, ກະຊວງແຜນການ ແລະ ການລົງທຶນ
- ລະດັບການສຶກສາ:
  - ປະລິນຍາໂທ ສາຂາເສດຖະສາດເພື່ອການພັດທະນາ, ທີ່ມະຫາວິທະຍາໄລແຫ່ງຊາດ ອິດສະຕາລີ, ປະເທດອິດສະຕາລີ



ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ
ກຳມະການອິດສະຫລະ

- ວັນເດືອນປີເກີດ: 05/02/1974
- ສັນຊາດ: ລາວ
- ຕຳແໜ່ງປັດຈຸບັນ: ຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລ ແຫ່ງຊາດ
- ລະດັບການສຶກສາ:
  - ປະລິນຍາເອກ ສາຂາວິຊາເສດຖະສາດ ຢູ່ມະຫາວິທະຍາໄລໂກເບ, ປະເທດຍີ່ປຸ່ນ.

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ວິງສະກຸນ ຍິ້ງຍິງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການຜະລິດ



ທ່ານ ນ. ສຸກສັນ ພິງພິລາ
ຮອງຜູ້ອຳນວຍການໃຫຍ່
ສາຍງານບໍລິຫານ ແລະ ແຜນການ



ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ກຸນລະພັນ ວົງມາທີ
ຮອງຜູ້ອຳນວຍການໃຫຍ່
ຮັບຜິດຊອບກວດສອບ ແລະ ສັນຍາ

4. ຄະນະກຳມະການຕ່າງໆ

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ສອດຄ່ອງກັບຂໍ້ກຳນົດ, ລະບຽບກົດໝາຍທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ: ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ.

4.1. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ຜ-ຟຟລ ປະກອບດ້ວຍ 5 ຄະນະກຳມະການ ເຊິ່ງໃນແຕ່ລະຄະນະກຳມະການປະກອບດ້ວຍ ສະມາຊິກສະພາບໍລິຫານ ຕາມລາຍລະອຽດດັ່ງນີ້:

ຄະນະກຳມະການກວດສອບ

1.	ທ່ານ ຮສ. ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫລະ	ເປັນປະທານ
2.	ທ່ານ ຄຳເພັງ ທິນນະກອນ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3.	ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການອິດສະຫລະ	ເປັນກຳມະການ
4.	ທ່ານ ພົງສະຫັວດ ເສນາພອນ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1.	ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການອິດສະຫລະ	ເປັນປະທານ
2.	ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3.	ທ່ານ ສົມລັດ ເມກອາກາດ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການກຳນົດຄ່າຕອບແທນ

1.	ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນປະທານ
2.	ທ່ານ ຮສ. ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫລະ	ເປັນຮອງປະທານ
3.	ທ່ານ ດວງສີ ພາຮາຍົກ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄັດເລືອກ

1.	ທ່ານ ຈັນທະບູນ ສຸກອາລຸນ	ຮອງປະທານສະພາບໍລິຫານ	ເປັນປະທານ
2.	ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ກຳມະການອິດສະຫລະ	ເປັນຮອງປະທານ
3.	ທ່ານ ດວງສີ ພາຮາຍົກ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

1.	ທ່ານ ຄຳເພັງ ທິນນະກອນ	ກຳມະການສະພາບໍລິຫານ	ເປັນປະທານ
2.	ທ່ານ ປອ. ບຸນທະວີ ສີສຸພັນທອງ	ຮອງປະທານສະພາບໍລິຫານ/ ກຳມະການອິດສະຫຼະ	ເປັນຮອງປະທານ
3.	ນາງ ທະວີຈັນ ທ່ຽງເທບວົງສາ	ກຳມະການອິດສະຫລະ	ເປັນກຳມະການ

4.2. ກອງປະຊຸມສະພາບໍລິຫານ

ການດຳເນີນງານ ປະຈຳໄຕມາດ 3 ປີ 2021 ສະພາບໍລິຫານ ໄດ້ຈັດກອງປະຊຸມຂຶ້ນທັງໝົດ 1 ຄັ້ງ, ຕາມລາຍລະອຽດລຸ່ມນີ້:

- ❖ ກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ 3/2021, ວັນທີ 20 ສິງຫາ 2021, ມີການເຄື່ອນໄຫວທີ່ສຳຄັນດັ່ງນີ້:
  - ຮັບຮອງບົດບັນທຶກກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ2/2021, ວັນທີ 13/05/2021.
  - ບົດລາຍງານການດຳເນີນທຸລະກິດ ຂອງບໍລິສັດ ລວມທັງບົດລາຍງານການເງິນ ປະຈຳ 06 ເດືອນຕົ້ນປີ 2021.

- ເງິນປັນຜົນ 06 ເດືອນຕົ້ນປີ 2021.
- ວິໄສທັດ ແລະ ພາລະກິດ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ປັບປຸງ).
- ພິຈາລະນາການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຄັ້ງທີ 2 ປີ 2021.

1. ຄະນະກຳມະການກວດສອບ

ຄະນະກຳມະການກວດສອບໄດ້ ຈັດກອງປະຊຸມປະຈຳໄຕມາດ 3 ປີ 2021 ຂຶ້ນ 1 ຄັ້ງຄື:

- ຄັ້ງທີ 3 ກອງປະຊຸມສາມັນຄັ້ງທີ III ໄດ້ຈັດຂຶ້ນວັນທີ 16 ສິງຫາ 2021 ເພື່ອປຶກສາຫາລືກ່ຽວກັບບົດລາຍງານທາງການເງິນປະຈຳຫົກເດືອນຕົ້ນປີ2021 ຊຶ່ງໄດ້ຜ່ານການກວດສອບ ຈາກຜູ້ກວດສອບບັນຊີພາຍນອກ(PwC).

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ຈັດກອງປະຈຳໄຕມາດ 3 ປີ 2021 ຂຶ້ນ 1 ຄັ້ງຄື: ປະຊຸມສະໄໝວິສາມັນຄັ້ງທີ I ປະຈຳປີ 2021 ໃນວັນທີ 19 ກໍລະກົດ 2021 ເຊິ່ງໃນກອງປະຊຸມໄດ້ຄົ້ນຄວ້າປຶກສາຫາລື ດັ່ງນີ້:

- ❖ ຄວາມຄືບໜ້າຂອງການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ ຄັ້ງທີ 1/2021 ແລະ ການຊອກຫາແຫຼ່ງທຶນເພີ່ມເຕີມ ຈາກທະນາຄານພາຍໃນປະເທດ.
- ❖ ຄວາມຄືບໜ້າການໂອນຮຸ້ນໂຄງການ IPPs
  - ໂຄງການທີ່ສຳເລັດການໂອນຊັບສິນ ຈາກ ຟຟລ ໃຫ້ ຜ-ຟຟລ.
  - ການໂອນຮຸ້ນຂອງ IPPs ຈາກ ຟຟລ ໃຫ້ ຜ-ຟຟລ.

4.3 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່

1. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ)

ໃນການດຳເນີນງານປະຈຳໄຕມາດ 3 ປີ 2021 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ຈັດຈ້າງ, ໂດຍ ແບ່ງອອກເປັນ 03 ພາກ ດັ່ງນີ້:

- ພາກ ການປະຕິບັດວຽກ (Works) ຈຳນວນ: 04 ໂຄງການ
- ພາກ ຈັດຊື້ສິນຄ້າ (Goods) ຈຳນວນ: 04 ໂຄງການ
- ພາກ ສະໜອງການບໍລິການ (Service) ຈຳນວນ: 01 ໂຄງການ

2. ຄະນະກຳມະການຄົ້ນຄວ້ານະໂຍບາຍ ແລະ ປະຕິບັດວິໄນ (ຄນຍວ)

ໃນການດຳເນີນງານປະຈຳໄຕມາດ 3 ປີ 2021 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ຈັດກອງປະຊຸມຂຶ້ນ 2 ຄັ້ງ, ພ້ອມໄດ້ຄົ້ນຄວ້າພິຈາລະນາ ເພື່ອແກ້ໄຂວຽກງານການດຳເນີນທຸລະກິດພາຍໃນ ຜ-ຟຟລ ດັ່ງນີ້:

- ກ່ຽວກັບຂໍ້ກຳນົດ ວ່າດ້ວຍລະບຽບ ນະໂຍບາຍຕໍ່ພະນັກງານ ແລະ ການປັບໄໝ ພະນັກງານ ຜ-ຟຟລ ຜູ້ທີ່ຜິດລະບຽບ.
- ກ່ຽວກັບ(ຮ່າງ) ຂໍ້ກຳນົດວ່າດ້ວຍການອະນຸມັດ ແລະ ປະກອບນະໂຍບາຍໃຫ້ພະນັກງານໄປຍົກລະດັບການສຶກສາຕໍ່ຢູ່ພາຍໃນ ແລະ ຕ່າງປະເທດ (ສະບັບປັບປຸງ ຄັ້ງທີ 1).
- ກ່ຽວກັບ ຂໍ້ກຳນົດວ່າດ້ວຍການຍົກຍ້າຍພະນັກງານ (ສະບັບປັບປຸງຄັ້ງທີ 1).
- ກ່ຽວກັບ (ຮ່າງ) ຂໍ້ກຳນົດ ວ່າດ້ວຍ ນະໂຍບາຍ ແລະ ລະບຽບການຕໍ່ພະນັກງານທີ່ ໄປປະຕິບັດວຽກງານຢູ່ບໍລິສັດຮ່ວມທຶນ ຫຼື ອົງການຈັດຕັ້ງອື່ນໆ.
- ກ່ຽວກັບ(ຮ່າງ) ຂໍ້ກຳນົດ ວ່າດ້ວຍ ການກຳນົດຕຳແໜ່ງງານ.
- ກ່ຽວກັບ(ຮ່າງ) ຕາຕະລາງອຳນາດໃນການດຳເນີນງານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
- ກ່ຽວກັບ(ຮ່າງ) ຂໍ້ກຳນົດ ວ່າດ້ວຍການປະເມີນຜົນພະນັກງານຂັ້ນນຳພາ.

5. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ສັງຄົມ

5.1 ວຽກງານດ້ານສິ່ງແວດລ້ອມ

- ເນື່ອງໃນວັນປ່ອຍປາ, ອະນຸລັກສັດນ້ຳ ແລະ ສັດປ່າແຫ່ງຊາດ 13 ກໍລະກົດ 2021 ເຂື່ອນໄຟຟ້ານ້ຳງື່ມ -1 ປະກອບສ່ວນແນວພັນປາ ຈຳນວນ 10,000 ໂຕ ແກ່ອຳນາດການປົກຄອງແຂວງວຽງຈັນ ເພື່ອປ່ອຍລົງສູ່ແມ່ນ້ຳງື່ມ ທີ່ ທ້າຍເຮືອນຈັກຂອງເຂື່ອນໄຟຟ້ານ້ຳງື່ມ-1, ເມືອງ ແກ້ວອຸດົມ ແຂວງ ວຽງຈັນ.
- ໄດ້ນຳສິ່ງບົດແຜນການຄຸ້ມຄອງ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດເຂື່ອນໄຟຟ້າ ນ້ຳສະນາ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ວຽງຈັນ ເພື່ອປະກອບຄຳຄິດຄຳເຫັນ.
- ໄດ້ຮ່າງສັນຍາຊື້ຂາຍ CER (Certified Emission Reduction Credits) ເຄຣດິດການຫຼຸດຜ່ອນອາຍພິດຂອງເຂື່ອນໄຟຟ້າເຊເສັດ2ຮ່ວມກັບບໍລິສັດ BB energy ແລະບໍລິສັດ ESL ເຊິ່ງເປັນວຽກງານ CDM (Clean Development Mechanism).
- ໄດ້ເປີດການລົງທະບຽນເກັບກຳຂໍ້ມູນ ແລະ ຈຳນວນຜູ້ໄດ້ຮັບຜົນກະທົບເພີ່ມຈາກການຕັນນ້ຳ ຂອງເຂື່ອນໄຟຟ້ານ້ຳຄານ 3, ເພື່ອດຳເນີນການຊົດເຊີຍຜົນກະທົບໃນຂັ້ນຕອນຕໍ່ໄປ.
- ບັນດາເຂື່ອນໄຟຟ້າຂອງ ຜ-ຟຟລ ແມ່ນໄດ້ມີການຕິດຕາມລະດັບນ້ຳ , ກວດກາຄຸນະພາບນ້ຳ ແລະ ອະນາໄມໜ້າອ່າງຢ່າງເປັນປະຈຳ ພ້ອມນີ້ນກໍ່ໄດ້ມີການສຳຫຼວດບໍລິເວນອ້ອມຮອບ ແລະ ກວດກາ ສະພາບການຕ່າງໆຢ່າງເປັນປົກະຕິ ລວມໄປເຖິງ ການສິ່ງເສີມຄວາມອຸດົມສົມບູນທາງດ້ານຊີວະນາໆພັນ.

5.2 ວຽກງານທາງດ້ານສັງຄົມ

- ເຂື່ອນໄຟຟ້າເຊເສັດ 2 ໄດ້ສ້າງຂົວຈົມທີ່ຫ້ວຍຕະປຸງ, ບ້ານດົງນ້ອຍ. ພ້ອມທັງ ປະກອບງົບປະມານໃນການ ສະໜອງອຸປະກອນການຮຽນ, ວັດສະດຸໃນການສ້ອມແປງໂຮງຮຽນບ້ານແສນວັງໃຫຍ່,ແລະ ໄດ້ສະໜອງ ການເຈາະນ້ຳບາດານ 4 ບໍ່ໃຫ້ແກ່ 2 ບ້ານ ໃນເມືອງ ເລົ່າງາມ, ແຂວງ ສາລະວັນ.
- 26 ກໍລະກົດ 2021, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໄດ້ມອບໂຫລະໂຄ່ງ ຈຳນວນ 3 ໜ່ວຍ ພ້ອມດ້ວຍ ອຸປະກອນຕິດຕັ້ງຄົບຊຸດ ໃຫ້ບ້ານ ຫ້ວຍດຳໃໝ່, ເມືອງທ່າແຕງ, ແຂວງ ເຊກອງ. ຈຸດປະສົງ ແມ່ນເພື່ອ ໃຫ້ນຳໃຊ້ເຂົ້າໃນການປະກາດແຈ້ງ ຂໍ້ມູນ ຂ່າວປະຊາສຳພັນໃຫ້ປະຊາຊົນໄດ້ຮັບຮູ້ ວຽກງານເຄື່ອນໄຫວ ຈາກອຳນາດການປົກຄອງ ແລະ ພາຍໃນບ້ານ.
- ໃນວັນທີ 27 ສິງຫາ 2021, ຜ-ຟຟລໄດ້ອຸປະຖຳເງິນຈຳນວນ 5 ລ້ານກີບ ໃຫ້ແກ່ຜູ້ຕາງໜ້າຈາກລັດວິສາຫະກິດໄຟຟ້າລາວ ເພື່ອປະກອບສ່ວນຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມທີ່ແຂວງໄຊຍະບູລີ.
- ໃນນີ້ ບັນດາເຂື່ອນຂອງ ຜ-ຟຟລ ແມ່ນໄດ້ເອົາໃຈໃສ່ໃນການ ໃນການມີສ່ວນຮ່ວມຕໍ່ສັງຄົມ ແລະ ຊຸມຊົນ ອ້ອມຂ້າງໃນທຸກໆດ້ານ ໂດຍສະເພາະ ແມ່ນການສິ່ງເສີມຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແລະ ສິ່ງເສີມການສຶກສາຂອງນ້ອງນັກຮຽນທີ່ຍັງຂາດເຂີນ, ການບູລະນະສ້ອມແປງ ແລະ ສະໜອງພື້ນຖານ ໂຄງລ່າງຕ່າງໆ ຢ່າງເປັນປະຈຳ..

6. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ, ໄດ້ດຳເນີນທຸລະກິດ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ຜ-ຟຟລ ທີ່ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງ ໃນແຕ່ລະໄລຍະກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວ ຂອງວຽກງານ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຜ່ານການຈັດຕັ້ງປະຕິບັດ ຜົນການດຳເນີນທຸລະກິດປະຈຳໄຕມາດ 3 ປີ 2021 ສາມາດສັງລວມໄດ້ດັ່ງນີ້:

6.1 ການຜະລິດ

ປະຈຳໄຕມາດ 3 ປີ 2021, ແຜນການຜະລິດຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແມ່ນເທົ່າກັບ 1.038,03 GWh, ປະຕິບັດຕົວຈິງສາມາດຜະລິດກະແສໄຟຟ້າໄດ້ 679,23 GWh ຫຼື ເທົ່າກັບ 65,43% ຂອງແຜນການ, ໂດຍທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 90,71%. ພ້ອມນັ້ນ, ແຜນການຜະລິດຈາກບັນດາໂຄງການຜູ້ຜະລິດໄຟຟ້າ ເອກະລາດຕາມສັດສ່ວນ ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 15 ໂຄງການ ແມ່ນ 1.403,61 GWh, ສາມາດປະຕິບັດໄດ້ຕົວຈິງ 1.470,34 GWh ຫຼື ເທົ່າກັບ 104,75% ຂອງແຜນການ, ໂດຍທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 131,17% ແລະ ແຜນການຜະລິດຂອງໂຄງການພະລັງງານແສງຕາເວັນ ແມ່ນ 6,65 GWh, ສາມາດປະຕິບັດຕົວຈິງໄດ້ 5,96 GWh ຫຼື ເທົ່າກັບ 89,62% ຂອງແຜນການ, ໂດຍທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 102,05%.

ສັງລວມແລ້ວ ປະຈຳໄຕມາດ 3 ປີ 2021 ແຜນການຜະລິດທົ່ວ ຜ-ຟຟລ ແມ່ນເທົ່າກັບ 2.448 ,29 GWh, ປະຕິບັດຕົວຈິງໄດ້ 2.155,53 GWh ຫຼື ເທົ່າກັບ 88,04% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 114,93% ເຊິ່ງສາເຫດການຜະລິດຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ຜະລິດບໍ່ໄດ້ຕາມແຜນເກີດມາຈາກ ປະລິມານນ້ຳໄຫຼເຂົ້າອ່າງ ໃນໄຕມາດ 3 ປີ 2021 ຫລຸດແຜນການ 27,79%, ລະບົບສາຍສົ່ງຂອງ ຟຟລ ມີຂີດຈຳກັດໃນ ການຮັບພະລັງງານ ເຮັດໃຫ້ບາງເຂື່ອນ ບໍ່ສາມາດແລ່ນຈັກຜະລິດກະແສໄຟຟ້າໄດ້ເຕັມກຳລັງ ລາຍລະອຽດໃນຕາຕະລາງ ລຸ່ມນີ້:

ລາຍລະອຽດ	ໄຕມາດ 3 ປີ 2021			ໄຕມາດ 3 ປີ 2020	
	ປະຕິບັດໄດ້ຕົວຈິງ GWh	ແຜນການ GWh	ທຽບແຜນການ %	ປະຕິບັດໄດ້ຕົວຈິງ GWh	ທຽບໄຕມາດ 3 ປີ 2020 %
ເຂື່ອນ ຜ-ຟຟລ ຄຸ້ມຄອງ	679,23	1.038,03	65,43%	748,81	90,71%
ການຜະລິດໃນ ເຂື່ອນ IPPs	1.470,34	1.403,61	104,75%	1.120,90	131,17%
ໂຄງການພະລັງງານແສງຕາເວັນ	5,96	6,65	89,62%	5,84	102,05%
ລວມ	**2.155,53**	**2.448,29**	**88,04%**	**1.875,55**	**114,93%**

6.2 ລາຍຮັບ

ໃນໄຕມາດ 3 ປີ 2021, ລາຍຮັບລວມ ຂອງ ຜ-ຟຟລ ແມ່ນເທົ່າກັບ 716.342 ລ້ານກີບ, ເຊິ່ງຫລຸດແຜນ 1,52% ແຕ່ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ແມ່ນເພີ່ມຂຶ້ນ 19,20% ສາເຫດທີ່ເຮັດໃຫ້ ຜ-ຟຟລ ບໍ່ສາມາດປະຕິບັດໄດ້ ຕາມແຜນໄຕມາດນີ້ ແມ່ນມາຈາກການຜະລິດຂອງບັນດາເຂື່ອນ ທີ່ ຜ-ຟຟລ ຄຸ້ມຄອງນັ້ນຫລຸດລົງ. ເຖິງແນວໃດກໍ່ຕາມ, ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ ແມ່ນເຫັນວ່າລາຍຮັບຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນເພີ່ມຂຶ້ນ (ໃນການລາຍງານ ອີງໃສ່ເອກະສານລາຍງານການເງິນແບບລວມ)

6.3 ລາຍຈ່າຍ

ຜ-ຟຟລ ມີລາຍຈ່າຍລວມທັງໝົດຈຳນວນ 747.033 ລ້ານກີບ, ສູງກວ່າຕົວເລກແຜນການ 390.334 ລ້ານກີບ ຫຼື 109,43% ແລະເພີ່ມຂຶ້ນ 92 ,52% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຫຼັກແມ່ນມາຈາກ ຂາດທຶນ ອັດຕາແລກປ່ຽນ ເຊິ່ງກວມຈຳນວນ 335.311 ລ້ານກີບ ເທົ່າກັບ 44,89% ຂອງລາຍຈ່າຍທັງໝົດ, ລາຍຈ່າຍທາງການເງິນ ກວມຈຳນວນ 226 .539 ລ້ານກີບ ເທົ່າກັບ 30 ,33% ຂອງລາຍຈ່າຍທັງໝົດ ແລະ ລາຍຈ່າຍຕົ້ນທຶນການຂາຍກວມ ຈຳນວນ 150 .625 ລ້ານກີບ ເທົ່າກັບ 20 ,16% ຂອງລາຍຈ່າຍທັງໝົດ (ໃນການລາຍງານ ອີງໃສ່ເອກະສານລາຍງານການ ເງິນແບບລວມ).

ລ/ດ	ລາຍການລະອຽດ	ໄຕມາດ 3 ປີ 2021		ທຽບໄຕມາດ 3 ປີ 2020
		ປະຕິບັດຕົວຈິງ (ຫົວໜ່ວຍ:ລ້ານກີບ)	ເພີ່ມ / (ຫລຸດ)	
1	ລາຍຮັບ	716.342	-1,52%	19,20%
2	ລາຍຈ່າຍ	747.033	109,43%	92,52%
	ຂາດທຶນ (1-2)	**(30.691)**	**-108,28%**	**-114,41%**

ໝາຍເຫດ: ອີງຕາມໃບລາຍງານການເງິນແບບລວມ

6.4 ຜົນການດຳເນີນທຸລະກິດ

ຜົນການດຳເນີນທຸລະກິດຂອງ ຜ-ຟຟລ ໃນໄຕມາດ 3 ປີ 2021 ຂາດທຶນສຸດທິຈຳນວນ 30.691 ລ້ານກີບ ທຽບໃສ່ແຜນການຫລຸດແຜນທີ່ຂຶ້ນໄວ້ 108,28% ແລະ ຫລຸດລົງ 114,41% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເນື່ອງຈາກການຜະລິດບໍ່ໄດ້ຕາມແຜນ ແລະ ຜົນກະທົບຈາກການແຂງຄ່າ ຂອງເງິນຕາຕ່າງປະເທດ ທຽບກັບສະກຸນເງິນກີບ ເຮັດໃຫ້ມີການຮັບຮູ້ຂາດທຶນອັດຕາແລກປ່ຽນ ແລະ ລາຍຈ່າຍດອກເບ້ຍເພີ່ມຂຶ້ນ.

6.5 ການມອບພັນທະ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປລາວ; ສະນັ້ນ ການມອບພັນທະ ກໍ່ເປັນອີກວຽກໜຶ່ງທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ດັ່ງນັ້ນ, ໃນໄຕມາດ 3 ປີ 2021 ຜ-ຟຟລ ໄດ້ມອບພັນທະໃຫ້ແກ່ລັດຖະບານ ເຊິ່ງປະກອບດ້ວຍ ອາກອນມູນຄ່າເພີ່ມ ແລະ ອາກອນເງິນເດືອນ / ເບ້ຍປະຊຸມ ລວມມູນຄ່າທັງໝົດ 26.674 ລ້ານກີບ.

ລຳດັບ	ລາຍການລະອຽດ	ຈຳນວນ ລ້ານກີບ
1	ອາກອນມູນຄ່າເພີ່ມ	25.575
2	ອາກອນເງິນເດືອນ / ເບ້ຍປະຊຸມ	1.099
ລວມທັງໝົດ		**26.674**

ເອກະສານລາຍງານການເງິນ ປະຈຳໄຕມາດ 3/2021

30 ກັນຍາ 2021

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ວັນທີ 30 ກັນຍາ 2021

ເອກະສານລາຍງານການເງິນປະຈຳໄຕມາດ 3 (ກ່ອນກວດສອບ)

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 30 ກັນຍາ 2021

	ຫົວ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	31 ທັນວາ 2020 ກວດສອບ ລ້ານກີບ	30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	31 ທັນວາ 2020 ກວດສອບ ລ້ານກີບ
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນ ໃນບໍລິສັດລູກ	3	-	-	619.680	619.680
ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ	4,1	5.187.627	5.190.681	5.187.627	5.190.681
ເງິນລົງທຶນ ໃນບໍລິສັດຮຸ້ນສ່ວນ	4,2	3.078.760	3.010.187	3.078.760	3.010.187
ເງິນລົງທຶນທົ່ວໄປ		375.688	-	375.688	-
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ	5, 12	1.973.406	1.973.406	2.000.856	1.999.754
ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ	6	9.106.797	9.436.044	8.567.131	8.896.788
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ		75	413	75	413
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ swap		-	-	-	-
ໜີ້ຕ້ອງຮັບຈາກສັນຍາ swap		203.129	234.296	203.129	234.296
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ-ໂຄງການກໍ່ສ້າງ		341.075	341.075	-	-
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ้ำປะกัน		-	63.211	-	63.211
ຊັບສິນທີ່ບໍ່ໝຸນວຽນອື່ນໆ		27.450	49.086	27.450	48.715
ລວມຊັບສິນບໍ່ໝຸນວຽນ		**20.294.007**	**20.298.399**	**20.060.396**	**20.063.725**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		898.964	265.554	879.923	247.215
ເງິນລົງທຶນໄລຍະສັ້ນ		29.952	27.840	29.952	27.840
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	12	301.921	280.632	301.921	280.632
ໜີ້ຕ້ອງຮັບການຄ้า ແລະ ໜີ້ຕ້ອງຮັບອື່ນໆ	7	2.234.546	1.509.848	2.258.430	1.529.287
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ swap		2.694	11.867	2.694	11.867
ອາໄຫຼ່ ແລະ ເຄື່ອງໃນສາງ, ສຸດທິ		3.490	3.523	3.490	3.523
ຊັບສິນໝຸນວຽນອື່ນໆ		2.937.817	2.305.163	2.915.203	2.298.272
ລວມຊັບສິນໝຸນວຽນ		**6.409.384**	**4.404.427**	**6.391.613**	**4.398.636**
ລວມຍອດຊັບສິນ		**26.703.391**	**24.702.826**	**26.452.009**	**24.462.361**

ທ່ານ ດວງສີ ພາທາຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 30 ກັນຍາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	31 ທັນວາ 2020 ກວດສອບ ລ້ານກີບ	30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	31 ທັນວາ 2020 ກວດສອບ ລ້ານກີບ
ທຶນ ແລະ ໜີ້ສິນ					
ທຶນ					
ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		565.024	565.024	565.024	565.024
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		72.150	34.022	72.150	34.022
ກຳໄລສະສົມ		1.118.721	987.824	1.156.193	1.028.574
ທຶນທີ່ເປັນສ່ວນບໍລິສັດ		**9.458.731**	**9.289.706**	**9.496.203**	**9.330.456**
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		3.694	4.014	-	-
ລວມທຶນ		**9.462.425**	**9.293.720**	**9.496.203**	**9.330.456**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ຢືມໄລຍະຍາວສຸດທິ	8	3.108.302	3.121.428	2.892.457	2.924.501
ຮຸ້ນກູ້ສຸດທິ	9	10.347.671	8.343.462	10.347.671	8.343.462
ລວມໜີ້ສິນບໍ່ໝຸນວຽນ		**13.455.973**	**11.464.890**	**13.240.128**	**11.267.963**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		306.815	178.608	263.250	134.222
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	8	1.237.829	1.091.095	1.217.278	1.058.644
ເງິນກູ້ຢືມໄລຍະສັ້ນສຸດທິ	8	379.814	98.505	379.814	98.505
ຮຸ້ນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	9	1.072.896	1.931.841	1.072.896	1.931.841
ລາຍຈ່າຍຄ້າງຈ່າຍ	10	786.240	643.041	781.041	639.604
ໜີ້ສິນໝຸນວຽນອື່ນໆ		1.399	1.126	1.399	1.126
ລວມຍອດໜີ້ສິນໝຸນວຽນ		**3.784.993**	**3.944.216**	**3.715.678**	**3.863.942**
ລວມຍອດໜີ້ສິນ		**17.240.966**	**15.409.106**	**16.955.806**	**15.131.905**
ລວມຍອດທຶນ ແລະ ໜີ້ສິນ		**26.703.391**	**24.702.826**	**26.452.009**	**24.462.361**

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ອັນແສງ ອັນມະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກ
ສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ	30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ
ລາຍຮັບຈາກການຂາຍ		341.987	366.898	337.164	360.194
ຕົ້ນທຶນໃນການຂາຍ		(150.625)	(137.536)	(146.551)	(133.852)
ກຳໄລຂັ້ນຕົ້ນ		**191.362**	**229.362**	**190.613**	**226.342**
ລາຍຮັບອື່ນໆ		6.863	4.942	4.501	3.689
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(34.558)	(34.499)	(30.919)	(30.499)
ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ		(335.311)	(30.310)	(330.603)	(11.413)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ					
ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	4	367.492	229.137	367.492	229.137
ກຳໄລກ່ອນລາຍຈ່າຍທາງການເງິນ		**195.848**	**398.632**	**201.084**	**417.256**
ລາຍຈ່າຍທາງການເງິນ		(226.539)	(185.081)	(226.539)	(182.289)
ກຳໄລກ່ອນອາກອນກຳໄລ		**(30.691)**	**213.551**	**(25.455)**	**234.967**
ອາກອນກຳໄລ		-	(604)	-	(604)
ກຳໄລສຳລັບໃນຮອບເວລາ		**(30.691)**	**212.947**	**(25.455)**	**234.363**
ສ່ວນຂອງກຳໄລທີ່ເປັນຂອງ:					
ສ່ວນຂອງບໍລິສັດແມ່		(30.526)	214.101	(25.455)	234.363
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(165)	(1.154)	-	-
		(30.691)	**212.947**	**(25.455)**	**234.363**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	11	(18,18)	127,52	(15,16)	139,58

ທ່ານ ດວງສີ ພາທາຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານສ່ວນປ່ຽນແປງຂອງທຶນແບບລວມ
ສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021

	ເອກະສານລາຍງານການເງິນແບບລວມ							
	ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ ລ້ານກີບ	ລວມ ທຶນຂອງຜູ້ຖືຮຸ້ນ ລ້ານກີບ
ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2020								
ໃນວັນທີ 1 ກໍລະກົດ 2020	6.717.215	985.621	547.147	18.185	826.767	9.094.935	5.019	9.099.954
ກຳໄລສຳລັບໃນຮອບເວລາ	-	-	-	-	214.101	214.101	(1.154)	212.947
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	12.062	-	12.062	-	12.062
ຍອດເຫຼືອໃນວັນທີ 30 ກັນຍາ 2020 (ກ່ອນກວດສອບ)	**6.717.215**	**985.621**	**547.147**	**30.247**	**1.040.868**	**9.321.098**	**3.865**	**9.324.963**
ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2021								
ໃນວັນທີ 1 ກໍລະກົດ 2021	6.717.215	985.621	565.024	37.237	1.149.247	9.454.344	3.859	9.458.203
ກຳໄລສຳລັບໃນຮອບເວລາ	-	-	-	-	(30.526)	(30.526)	(165)	(30.691)
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	34.913	-	34.913	-	34.913
ຍອດເຫຼືອໃນວັນທີ 30 ກັນຍາ 2021 (ກ່ອນກວດສອບ)	**6.717.215**	**985.621**	**565.024**	**72.150**	**1.118.721**	**9.458.731**	**3.694**	**9.462.425**

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານລ່ວນປ່ຽນແປງຂອງທຶນແບບແຍກ
ສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021

	ເອກະສານລາຍງານການເງິນແບບແຍກ					
	ທຶນ ຈົດທະບຽນ ລ້ານກີບ	ລ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2020						
ໃນວັນທີ 1 ກໍລະກົດ 2020	6.717.215	985.621	547.147	18.185	852.147	9.120.315
ກຳໄລສຳລັບໃນຮອບເວລາ	-	-	-	-	234.363	234.363
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	12.062	-	12.062
ຍອດເຫຼືອໃນວັນທີ 30 ກັນຍາ 2020 (ກ່ອນກວດສອບ)	**6.717.215**	**985.621**	**547.147**	**30.247**	**1.086.510**	**9.366.740**
ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2021						
ໃນວັນທີ 1 ກໍລະກົດ 2021	6.717.215	985.621	565.024	37.237	1.181.648	9.486.745
ກຳໄລສຳລັບໃນຮອບເວລາ	-	-	-	-	(25.455)	(25.455)
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	34.913	-	34.913
ຍອດເຫຼືອໃນວັນທີ 30 ກັນຍາ 2021 (ກ່ອນກວດສອບ)	**6.717.215**	**985.621**	**565.024**	**72.150**	**1.156.193**	**9.496.203**

ທ່ານ ດວງສີ ພາຣາຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ອັນແສງ ອັນມະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກ
ສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ	30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລກ່ອນອາກອນສຳລັບໃນຮອບເວລາ		(30.691)	213.551	(25.455)	234.967
ປັບປຸງ :					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		129.852	124.366	126.573	121.546
ຕັດຮອນລາຍຈ່າຍຕົ້ນທຶນການອອກຮຸ້ນກູ້		8.403	7.832	8.403	7.832
ລາຍຮັບຈາກດອກເບ້ຍ		(3.518)	-	(3.518)	-
ລາຍຈ່າຍທາງການເງິນ		226.539	140.354	226.539	137.562
ລາຍຈ່າຍອາກອນກຳໄລ		-	604	-	604
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		(367.492)	(229.137)	(367.492)	(229.137)
ການປ່ຽນແປງທຶນໝຸນວຽນ:		**(36.907)**	**257.570**	**(34.950)**	**273.374**
ຫຼຸດລົງ/(ເພີ່ມຂຶ້ນ) ໃນ					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		20.667	442	20.667	442
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ้ำປะกัน		-	41.868	-	41.868
ໜີ້ຕ້ອງຮັບຈາກລູກຄ้า ແລะ ໜີ້ຕ້ອງຮັບອື່ນໆ		(510.575)	(356.278)	(523.661)	(350.971)
ອาไหล่ เถื่องใบสาง		43	(11)	43	(11)
ຊັບສິນໝຸນວຽນອື່ນໆ		339.697	29.967	335.203	12.606
ໜີ້ຕ້ອງສົ່ງຜູ້ສะໜองการค้า ແລะ ໜີ້ຕ້ອງສົ່ງອື່ນໆ		33.170	43.125	33.747	38.157
ລາຍຈ່າຍค้างจ่าย		8.550	8.941	8.382	9.768
ລາຍຈ່າຍອາກອນกำไลค้างจ่าย		-	(604)	-	(604)
ໜີ້ສິນໝຸນວຽນອື່ນໆ		175	72	175	72
ເງິນສົດທີ່ໃຊ້ໃນ ກິດຈะกำการดำเนินงาน		**(145.180)**	**25.092**	**(160.394)**	**24.701**
ຈ่ายดอกเบ้ย		(236.648)	(184.492)	(236.648)	(182.582)
ກะแสเงินสดจากกิดจะกำการดำเนินงานสุดท		**(381.828)**	**(159.400)**	**(397.042)**	**(157.881)**
ກะแสเงินสดที่ใช้ในกิดจะกำการลงทุน					
ຈ่ายเงินลงทุนในบໍลิสัดลูก		-	-	-	(729)
ເງິນລົງທຶນໃນວິສาหะกิดขารุ้น ແລะ ບໍລິສັດຮຸ້ນສ่วน		(1.440)	(799)	(1.440)	(799)
ธับเงินจากการจ่ายล่องหน้าสำลับซับสินยู่พายใต้สัมยาสำปะทาน ແລะ ເງິນລົງທຶນ		-	-	-	36.448
ຈ่ายเงินสดสำลับซื้อซับสินยู่พายใต้สัมยาสำปะทาน		(4.342)	(15.979)	(701)	(11.321)
ธับเงินจากพากส่วนที่ก่วงอ้องกู้ยืมไลยะสั้น		-	43.239	-	43.239
ธับเงินปันผินจากเงินลงทุนในวิสาหะกิดขารุ้น ແລะ ບໍລິສັດຮຸ້ນส่วน		230.900	23.000	230.900	23.000
ກะแสเงินสดสุดท้ายที่ใช้ในกิดจะกำการลงทุน		**225.118**	**49.461**	**228.759**	**89.838**

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫา 19 ແມ่นถืกเป้นพากส่วนหนึ่ง ของเอกะสานลายงานการเงินแบบลวม และ แบบแยกเห้านี้.

ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກ
ສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021

	ຫົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ	30 ກັນຍາ 2021 ກ່ອນກວດສອບ ລ້ານກີບ	30 ກັນຍາ 2020 ກ່ອນກວດສອບ ລ້ານກີບ
ກະແສເງິນສົດຈາກກິດຈະກຳທາງການເງິນ					
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	8	594.170	55.190	594.170	18.741
ຊຳລະເງິນກູ້ຢືມໄລຍະສັ້ນ	8	(332.888)	(19.959)	(332.888)	(19.959)
ຊຳລະເງິນກູ້ຢືມໄລຍະຍາວ	8	(17.900)	(79.234)	(17.900)	(79.234)
ຮັບເງິນສົດຈາກການອອກຮຸ້ນກູ້	9	1.894.306	-	1.894.306	-
ຊຳລະເງິນຄືນຈາກການອອກຮຸ້ນກູ້	9	(1.284.833)	-	(1.284.833)	-
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**852.855**	**(44.003)**	**852.855**	**(80.452)**
ການເພີ່ມຂຶ້ນ/(ຫຼຸດລົງ) ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		696.145	(153.942)	684.572	(148.495)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນຕົ້ນງວດ		184.397	456.557	176.952	430.412
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		18.422	7.978	18.399	7.454
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍງວດ		**898.964**	**310.593**	**879.923**	**289.371**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ເງິນປັນຜົນຮັບຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈັດປະເພດບັນຊີໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		230.900	-	230.900	-
- ເປັນເງິນໃຫ້ກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ		-	85.000	-	85.000

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2021

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2021

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 19 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ (“ບໍລິສັດ”) ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ (“ຕລຊລ”) ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. (“ສປປລາວ”). ກຸ່ມບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 (“ວັນສ້າງຕັ້ງບໍລິສັດ”). ເປັນບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ (“ຟຟລ”).

ການຈົດທະບຽນຂອງບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດພະລັງງານຂອງ ຟຟລ ໂດຍ ການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງ ບໍລິສັດຕາມສຳນັກງານ ນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010 ນຍ, ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນ ໂຮງງານໄຟຟ້າເອກະລາດ ("IPP") ໂຄງການກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ເລີ່ມດຳເນີນທຸລະກິດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນ ເຊລະບ່ຳ, ຕາມການມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະ ສືບຕໍ່ກິດຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການຜະລິດໄປເຖິງຜູ້ ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ແມ່ນຂຶ້ນຢູ່ກັບ ຊັບສິນ ການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ກຸ່ມບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງກຸ່ມບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນໂດຍຫຍໍ້ປະຈຳໄຕມາດ 3 ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 10 ພະຈິກ 2021.

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນປະຈຳໄຕມາດ ໄດ້ຖືກສ້າງຂຶ້ນໃຫ້ສອດຄ່ອງກັບນະໂຍບາຍຂອງບໍລິສັດ ຕາມທີ່ໄດ້ອະທິບາຍລະ ອຽດຕ່າງໆ ໃນໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020. ເອກະສານລາຍງານການເງິນເບື້ອງ ຕົ້ນ (ປະກອບມີ: ໃບສະຫຼຸບຊັບສິນບັດ,ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ລາຍງານສ່ວນປ່ຽນແປງທຶນ ຕົນເອງຂອງຜູ້ຖືຮຸ້ນ) ທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ.

ເອກະສານລາຍງານການເງິນປະຈຳໄຕມາດ ຄວນຈະອ່ານຄູ່ກັບໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບ ຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການ ເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເງິນລົງທຶນໃນບໍລິສັດລູກ

	ເອກະສານລາຍງານການເງິນ ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	619.680
ເພີ່ມຂຶ້ນ	-
ລວມ	**619.680**

4 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	8.200.868
ກຳໄລສຸດທິຂອງຮຸ້ນຈາກວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	788.711
ລາຍໄດ້ເງິນປັນຜົນ	(388.929)
ເພີ່ມຂຶ້ນ	3.297
ການຈັດປະເພດໃໝ່ເປັນເງິນລົງທຶນທົ່ວໄປ	(375.688)
ສ່ວນແຕກຕ່າງຈາກການແລກປ່ຽນ	38.128
ລວມ	**8.266.387**

4 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ໃນວັນທີ 30 ກັນຍາ 2021 ແລະ ເງິນປັນຜົນສຳລັບສາມເດືອນສິ້ນສຸດວັນທີ 30 ກັນຍາ 2021 ມີດັ່ງນີ້:

4.1 ເງິນລົງທຶນໃນວິສາຫະກິດຂາຮຸ້ນ

				ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
	ອັດຕາສ່ວນເງິນລົງທຶນ			ມູນຄ່າຕົ້ນທຶນ		ການດ້ອຍຄ່າ		ມູນຄ່າສຸດທິ		ເງິນລົງທຶນວິທີສ່ວນໄດ້ເສຍ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2021	31 ທັນວາ 2020	ປະເພດທຸລະກິດ	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	30 ກັນຍາ 2020
	(%)			*(ລ້ານກີບ)*									
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງື່ມ 2 ຈຳກັດ	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	442.252	373.984	-	13.905
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	90.412	81.924	-	-
ບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	102.660	111.701	-	-
ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ	20	20	ຜະລິດໄຟຟ້າ	605.016	605.016	-	-	605.016	605.016	846.151	742.392	-	-
ບໍລິສັດ ໄຟຟ້າ ນ້ຳແບ ຈຳກັດ	10	10	ຜະລິດໄຟຟ້າ	18.162	18.162	-	-	18.162	18.162	27.589	27.589	-	-
ບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ	20	20	ຜະລິດໄຟຟ້າ	5.537	5.537	-	-	5.537	5.537	11.034	9.690	-	-
ບໍລິສັດ ໄຟຟ້າ ໄຊຍະບຸລີ ຈຳກັດ	20	20	ຜະລິດໄຟຟ້າ	3.172.963	3.172.963	-	-	3.172.963	3.172.963	3.440.039	3.212.052	-	-
ບໍລິສັດ ໄຟຟ້າ ພະລັງນ້ຳ ນ້ຳອຸ ຈຳກັດ	15	15	ຜະລິດໄຟຟ້າ	-	364.640	-	-	-	364.640	-	375.688	-	-
ບໍລິສັດ ໄຟຟ້າ ນ້ຳມັງ 1 ຈຳກັດ	10	10	ຜະລິດໄຟຟ້າ	37.596	37.596	-	-	37.596	37.596	41.878	41.878	-	-
ບໍລິສັດ ໄຟຟ້າ ນ້ຳທາ 1 ພາວເວີ ຈຳກັດ	20	20	ຜະລິດໄຟຟ້າ	244.474	244.474	-	-	244.474	244.474	185.612	213.783	-	-
ລວມວິສາຫະກິດຂາຮຸ້ນ				**4.650.752**	**5.015.392**	**-**	**-**	**4.650.752**	**5.015.392**	**5.187.627**	**5.190.681**	**-**	**13.905**

4 ເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 ເງິນລົງທຶນໃນບໍລິສັດຮຸ້ນສ່ວນ

	ອັດຕາສ່ວນເງິນລົງທຶນ			ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2021	31 ທັນວາ 2020	ປະເພດທຸລະກິດ	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	31 ທັນວາ 2020	30 ກັນຍາ 2021	30 ກັນຍາ 2021
	(%)			*(ລ້ານກີບ)*									
ບໍລິສັດຮຸ້ນສ່ວນ													
ບໍລິສັດ ເຫີນຫີນບູນ ພາວເວີ ຈຳກັດ	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	2.334.720	2.271.757	230.899	-
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	30.188	20.594	-	9.095
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ	60	60	ຜະລິດໄຟຟ້າ	26.328	24.470	-	-	26.328	24.470	15.162	14.558	-	-
ບໍລິສັດ ໄຟຟ້າ ນ້ຳດີກ 1 ຈຳກັດ	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	52.038	52.129	-	-
ບໍລິສັດ ເຂື່ອນໄຟຟ້າ ນ້ຳພູນ ຈຳກັດ	51	51	ຜະລິດໄຟຟ້າ	10.403	8.964	-	-	10.403	8.964	4.526	4.169	-	-
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ	60	60	ບໍລິການ ບຳລຸງຮັກສາ	-	-	-	-	-	-	(344)	(281)	-	-
ບໍລິສັດ ອີດີແອວເຈັນ ເຣດ໌ ຈຳກັດ	80	80	ບໍລິການ	123.222	123.222	-	-	123.222	123.222	122.068	122.068	-	-
ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ	15	15	ຜະລິດໄຟຟ້າ	497.163	497.163	-	-	497.163	497.163	473.549	481.943	-	-
ບໍລິສັດ ໄຟຟ້າ ນ້ຳລີກ 1 ຈຳກັດ	10	10	ຜະລິດໄຟຟ້າ	34.680	34.680	-	-	34.680	34.680	46.853	43.250	-	-
ລວມບໍລິສັດຮຸ້ນສ່ວນ				**1.868.605**	**1.865.308**	**-**	**-**	**1.868.605**	**1.865.308**	**3.078.760**	**3.010.187**	**230.899**	**9.095**
ລວມວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ				**6.519.357**	**6.880.700**	**-**	**-**	**6.519.357**	**6.880.700**	**8.266.387**	**8.200.868**	**230.899**	**23.000**

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຂອງບໍລິສັດຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

5 ເງິນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

	ເອກະສານລາຍງານການເງິນ ແບບລວມ	ເອກະສານລາຍງານການເງິນ ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)	
ວັນທີ 1 ມັງກອນ	1.973.406	1.999.754
ເພີ່ມຂຶ້ນ	-	-
ຫຼຸດລົງ	-	-
ໂອນຈາກການລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	-
ສ່ວນແຕກຕ່າງຈາກການແລກປ່ຽນ	-	1.102
ລວມ	**1.973.406**	**2.000.856**

6 ຊັບສິນພາຍໃຕ້ສັນຍາສຳປະທານ

	ເອກະສານລາຍງານການເງິນ ແບບລວມ	ເອກະສານລາຍງານການເງິນ ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)	
ວັນທີ 1 ມັງກອນ	9.436.044	8.896.788
ເພີ່ມຂຶ້ນ	60.312	48.970
ຫັກຄ່າຫຼ້ຍຫ້ຽນ	(389.559)	(378.627)
ລວມ	**9.106.797**	**8.567.131**

7 ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)			
ໜີ້ຕ້ອງຮັບການຄ້າຈາກ ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍທີ 12)	1.873.759	1.368.564	1.856.585	1.351.794
ໜີ້ຕ້ອງຮັບອື່ນໆຈາກ ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍທີ 12)	345.042	123.775	340.242	118.975
ອື່ນໆ	15.745	17.509	61.603	58.518
ລວມ	**2.234.546**	**1.509.848**	**2.258.430**	**1.529.287**

8 ເງິນກູ້ຢືມ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)			
ເງິນກູ້ຢືມໄລຍະສັ້ນ	379.814	98.505	379.814	98.505
ເງິນກູ້ຢືມໄລຍະຍາວ ຈັດເປັນ ໄລຍະສັ້ນ	1.237.829	1.091.095	1.217.278	1.058.644
ລວມເງິນກູ້ຢືມໄລຍະສັ້ນ ແລະ ເງິນກູ້ຢືມໄລຍະຍາວ ຈັດເປັນ ໄລຍະສັ້ນ	**1.617.643**	**1.189.600**	**1.597.092**	**1.157.149**
ເງິນກູ້ຢືມໄລຍະຍາວ	3.108.302	3.121.428	2.892.457	2.924.501
ລວມເງິນກູ້ຢືມໄລຍະຍາວ	**3.108.302**	**3.121.428**	**2.892.457**	**2.924.501**
ລວມ	**4.725.945**	**4.311.028**	**4.489.549**	**4.081.650**

8 ເງິນກູ້ຢືມ (ຕໍ່)

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບວັນທີ 30 ກັນຍາ 2021 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2021 (ກ່ອນກວດສອບ)		30 ກັນຍາ 2021 (ກ່ອນກວດສອບ)	
	(ລ້ານກີບ)			
ວັນທີ 1 ມັງກອນ	4.311.028		4.081.650	
ເພີ່ມຂຶ້ນ	682.253		682.253	
ຈ່າຍເງິນຄືນ	(600.090)		(590.160)	
ປ່ຽນແປງສຸດທິໃນຕົ້ນທຶນເງິນກູ້ລໍຖ້າຕັດບັນຊີ	232		232	
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	332.522		315.574	
ລວມ	**4.725.945**		**4.489.549**	

9 ຮຸ້ນກູ້

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)	
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ	1.072.896	1.931.841
ຮຸ້ນກູ້ທີ່ຈັດເປັນໄລຍະຍາວ	10.347.671	8.343.462
ລວມ	**11.420.567**	**10.275.303**

9 ຮຸ້ນກູ້ (ຕໍ່)

ການເຄື່ອນໄຫວຮຸ້ນກູ້ສຳລັບສິ້ນສຸດວັນທີ 30 ກັນຍາ 2021 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	10.275.303
ເພີ່ມຂຶ້ນ ສຸດທິ	1.894.306
ຈ່າຍເງິນຄືນ	(1.284.833)
ຕັດຈຳໜ່າຍຕົ້ນທຶນທາງການເງິນລໍຖ້າຕັດບັນຊີ	18.194
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	517.597
ລວມ	**11.420.567**

ໃນວັນທີ 08 ກໍລະກົດ 2021, ບໍລິສັດໄດ້ສຳເລັດ ອອກຮຸ້ນກູ້ເງິນບາດ ທີ່ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ, ຖືກຈົດທະບຽນ ກັບ ສະມາຄົມຕະຫຼາດຕາສານໝີ້ໄທ (“ThaiBMA”). ມູນຄ່າລວມຂອງຮຸ້ນກູ້ແມ່ນ 2.099,4 ລ້ານບາດ ມີອາຍຸ 3ປີ ໂດຍ ມີອັດຕາດອກເບ້ຍຄົງທີ່ຕໍ່ປີ 5,9% ແລະ ຈະຕ້ອງຈ່າຍດອກເບ້ຍເປັນປະຈຳໄຕມາດ.

ໃນວັນທີ 23 ກັນຍາ 2021, ບໍລິສັດໄດ້ສຳເລັດ ອອກຮຸ້ນກູ້ເງິນບາດ ທີ່ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ, ຖືກຈົດທະບຽນ ກັບ ສະມາຄົມຕະຫຼາດຕາສານໝີ້ໄທ (“ThaiBMA”). ມູນຄ່າລວມຂອງຮຸ້ນກູ້ແມ່ນ 3.527,4 ລ້ານບາດ ໂດຍປະກອບມີ ຮຸ້ນກູ້ 2ຊຸດຄື ຮຸ້ນກູ້ອາຍຸ 3ປີ ແລະ 4ປີ ໂດຍມີອັດຕາດອກເບ້ຍຄົງທີ່ຕໍ່ປີ 5,9% ແລະ 6,5% ຕາມລຳດັບ ແລະ ຈະຕ້ອງ ຈ່າຍດອກເບ້ຍເປັນປະຈຳໄຕມາດ.

10 ລາຍຈ່າຍຄ້າງຈ່າຍ

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)			
ດອກເບ້ຍຄ້າງຈ່າຍ	559.688	485.765	558.806	484.883
ຄ່າພາກຫຼວງ ແລະອາກອນອື່ນໆຄ້າງຈ່າຍ	189.473	151.939	188.944	151.459
ອື່ນໆ	37.079	5.337	33.291	3.262
ລວມ	**786.240**	**643.041**	**781.041**	**639.604**

11 ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນ ສຳລັບວັນທີ 30 ກັນຍາ 2021 ແລະ 2020 ແມ່ນຄິດໄລ່ຕາມກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍລະຫວ່າງໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)			
ກຳໄລ(ຂາດທຶນ)ທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ (ລ້ານກີບ)	(30.526)	214.101	(25.455)	234.363
ຈຳນວນຮຸ້ນສາມັນທີ່ອອກຈຳໜ່າຍ (ລ້ານຮຸ້ນ)	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ(ກີບ)	**(18,18)**	**127,52**	**(15,16)**	**139,58**

12 ພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບສິ້ນສຸດວັນທີ 30 ກັນຍາ 2021 ແລະ 2020 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)			
ບໍລິສັດແມ່				
ຂາຍກະແສໄຟຟ້າ	341.987	366.898	337.164	360.194
ລາຍຈ່າຍທາງການເງິນ	49.152	48.282	49.152	48.282
ລາຍຮັບທາງການເງິນ	3.518	3.894	3.518	3.894

12 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດຄົງເຫຼືອໃນວັນທີ 30 ກັນຍາ 2021 ແລະ 31 ທັນວາ 2020 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)			
ລາຍຈ່າຍລ່ວງໜ້າສຳລັບການລົງທຶນຊັບສິນພາຍໃຕ້ສັນຍາສຳປະທານ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	1.973.406	1.973.406	1.973.406	1.973.406
ບໍລິສັດລູກ				
ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ້ ຈຳກັດ	-	-	15.625	14.523
ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ	-	-	11.825	11.825
	1.973.406	**1.973.406**	**2.000.856**	**1.999.754**
ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	301.921	280.632	301.921	280.632

ລາຍການເຄື່ອນໄຫວຂອງເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	280.632
ເພີ່ມຂຶ້ນ	-
ຊຳລະເງິນ	-
ຜົນຕ່າງຈາກອັດຕາແລກປ່ຽນ	21.289
ລວມ	**301.921**

12 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)	30 ກັນຍາ 2021 (ກ່ອນກວດສອບ)	31 ທັນວາ 2020 (ກວດສອບ)
	(ລ້ານກີບ)			
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	1.983.101	1.409.906	1.965.927	1.393.136
ບໍລິສັດລູກ ແລະ ອື່ນໆ				
ບໍລິສັດ ເຫີນຫິນບຸນ ພາວເວີ ຈຳກັດ	230.900	77.633	230.900	77.633
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ	4.800	4.800	-	-
ລວມ (ບົດອະທິບາຍທີ 7)	**2.218.801**	**1.492.339**	**2.196.827**	**1.470.769**
ເງິນກູ້ໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ				
- ເງິນກູ້ໄລຍະສັ້ນ	1.181.134	961.173	1.181.134	961.173
- ເງິນກູ້ໄລຍະຍາວ	2.820.442	2.818.225	2.820.442	2.818.225
ລວມ	**4.001.576**	**3.779.398**	**4.001.576**	**3.779.398**

ການເຄື່ອນໄຫວຂອງເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງໃນວັນທີ 30 ກັນຍາ 2021 ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2021 (ກ່ອນກວດສອບ)
	(ລ້ານກີບ)
ໃນວັນທີ 1 ມັງກອນ	3.779.398
ເພີ່ມຂຶ້ນ	-
ຊຳລະເງິນ	(60.122)
ຜົນຕ່າງຈາກອັດຕາແລກປ່ຽນ	282.300
ລວມ	**4.001.576**

ຜູ້ອຳນວຍການໃຫຍ່



ດວງສີ ພາຣາຍິກ

---

๑ ຫົວໜ້າພະແນກບັນຊີ

ສຸພັນ ຜາສຸດໃຈ

---

๒ ຫົວໜ້າພະແນກກວດສອບພາຍໃນ

ຍຸວະລັກ ພົມມະລືຊາ
